# ເຂົ້າໄກ່ນ້ອຍ

## ໃນແຂວງ ຊຽງຂວາງ

*ເຂົ້າໄກ່ນ້ອຍ ເປັນແນວພັນເຂົ້າພື້ນເມືອງ ທີ່ມີທັງໝົດ 7 ສາຍພັນ ເໝາະສົມກັບສະພາບແວດລ້ອມຂອງແຂວງຫົວພັນ . ເຂົ້າໄກ່ນ້ອຍເປັນທີ່ຮູ້ຈັກດີ ຍ້ອນລົດຊາດ ແລະ ກິ່ນຫອມສະເພາະຕົວຂອງມັນ ແລະ ຄວາມຕ້ອງການເຂົ້າໄກ່ນ້ອຍນັບມື້ນັບເພີ່ມຂຶ້ນ. ເປັນພືດບູລິມະສິດໜຶ່ງຂອງແຂວງ.*



### ການຂະຫຍາຍ ແລະ ຜົນກະທົບ:

- ມີການປູກເຂົ້າ 7 ສາຍພັນທີ່ແຕກຕ່າງກັນໄປຕາມ ສີ, ລົດຊາດ ແລະ ຄວາມຫອມ.
- ເຂົ້າໄກ່ນ້ອຍໄດ້ປູກຢູ່ 5 ເມືອງຄື: ເມືອງແປກ, ເມືອງພູກູດ, ເມືອງຜາໄຊ, ເມືອງຄໍາ ແລະ ເມືອງຄູນ.
- ປະຈຸບັນ ຜົນຜະລິດເຂົ້າໄກ່ນ້ອຍໄດ້ ຈໍານວນ 51,300 ໂຕນ ໃນແຕ່ລະປີ ໃນເນື້ອທີ່ນາ 12,000 ເຮັກຕາ.
- ປະຈຸບັນການຜະລິດເມັດແນວພັນເຂົ້າໄກ່ນ້ອຍ ທີ່ມີຄຸນນະພາບ ແມ່ນໄດ້ປະມານ 21,710 ກິໂລຊຶ່ງລວມມີ: ເມັດພັນບໍລິສຸດ(BS) 123 ກິໂລ, ເມັດພັນພື້ນຖານ(R1) 1,300 ກິໂລ, ເມັດພັນຂຶ້ນທະບຽນ (R2) 2,000 ກິໂລ ແລະ ເມັດພັນຢັ້ງຢືນ(R3) 177,500 ກິໂລເພື່ອໃຫ້ປະຊາຊົນນໍາເອົາໄປປູກຕໍ່ໄປ.



### ການຕະຫລາດ:

- ຈໍານວນເຂົ້າທັງໝົດທີ່ໄດ້ຂາຍສົ່ງອອກໄປແຂວງອື່ນ ມີ 10,300 ໂຕນ ແລະ ອີກ 10 ໂຕນ ແມ່ນຂາຍຢູ່ພາຍໃນທ້ອງຖິ່ນ.
- ພໍ່ຄ້າ-ແມ່ຄ້າທ້ອງຖິ່ນ ຈໍານວນ 5 ຄົນ ທີ່ເຮັດການຊື້-ຂາຍເຂົ້າໄກ່ນ້ອຍຢູ່ພາຍໃນແຂວງ: ວຽງສິດ, ບຸນນໍາ, ວອນ, ວັນ ແລະ ພິມພອນ.
- ລາຄາຂາຍຍົກເຂົ້າໄກ່ນ້ອຍຢູ່ກັບທີ່ ແມ່ນ 3,500-4,000 ກີບຕໍ່ກິໂລ, ສ່ວນລາຄາຂາຍຍ່ອຍຢູ່ຕະຫລາດ ແມ່ນ 5,000-8,000 ກີບຕໍ່ກິໂລ ແລະ ລາຄາຂາຍຍ່ອຍຢູ່ຕາມຮ້ານຄ້າໃຫຍ່ ແມ່ນ 8,000-11,000 ກີບຕໍ່ກິໂລ.



### ໂອກາດ:

- ຍົກສະມັດຕະພາບການຜະລິດໃນເນື້ອທີ່ນາທີ່ມີຢູ່ແລ້ວ.
- ຂະຫຍາຍເພີ່ມເນື້ອທີ່ດິນນາປູກເຂົ້າໄກ່ນ້ອຍ.
- ນໍາໃຊ້ການຂຶ້ນທະບຽນຢັ້ງຢືນພູມສັນຖານ (GI) ເພື່ອປັບປຸງຂະຫຍາຍການຕະຫລາດ.
- ປັບປຸງເມັດພັນໃຫ້ມີຄຸນນະພາບສູງ.
- ປັບປຸງການຜະລິດເມັດພັນບໍລິສຸດ ຂອງ ເຂົ້າໄກ່ນ້ອຍ ທັງ 7 ສາຍພັນ.
- ການຂະຫຍາຍຕະຫລາດ ອອກໃຫ້ກ້ວາງຂວາງ.





Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

NAFRI

TABI
The Agro-Biodiversity Initiative (TABI)